

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ເອກະສານລາຍງານການເງິນ
(ທົບທວນຄືນ)
ໃນວັນທີ ແລະສຳລັບໄລຍະສາມເດືອນ ຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2021

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານຖານະການເງິນ
ໃນວັນທີ 30 ກັນຍາ 2021

	ບົດ ອະທິບາຍ	ທົບທວນຄືນ 30 ກັນຍາ 2021 ກີບ	ກວດສອບ 31 ທັນວາ 2020 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	5	10.026.319.601	12.404.353.323
ສັດສ່ວນໝຸນວຽນຂອງໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ, ສຸດທິ	6	47.965.106.506	47.412.873.880
ຊັບສິນຖືໄວ້ເພື່ອຂາຍ, ສຸດທິ	7	279.165.744	187.570.860
ຊັບສິນໝຸນວຽນອື່ນໆ	8	378.206.821	334.581.595
ລວມຊັບສິນໝຸນວຽນ		**58.648.798.672**	**60.339.379.658**
ຊັບສິນບໍ່ໝຸນວຽນ			
ເງິນຝາກທີ່ທະນາຄານແຫ່ງ ສປປ ລາວ		2.000.002.700	2.000.002.700
ໜີ້ຕ້ອງຮັບຈາກສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ, ສຸດທິ	6	30.588.880.258	25.302.582.221
ຊັບສິນຄົງທີ່ມີຕົວຕົນ, ສຸດທິ	9	784.007.860	1.037.381.048
ຊັບສິນຄົງທີ່ບໍ່ມີຕົວຕົນ, ສຸດທິ	10	199.618.809	60.019.000
ຊັບສິນບໍ່ໝຸນວຽນ ອື່ນໆ		131.153.860	-
ລວມຊັບສິນບໍ່ໝຸນວຽນ		**33.703.663.487**	**28.399.984.969**
ລວມຊັບສິນ		92.352.462.159	88.739.364.627

ທ້າວ ມາມິນ ຕຣີສົກວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 5 ພະຈິກ 2021

ທ່ານນາງ ສຸລິພອນ ສຸວັນໄຊລິບ
ຜູ້ຈັດການພະແນກບັນຊີ

ວັນທີ: 5 ພະຈິກ 2021

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 8 - 17 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ.

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານຖານະການເງິນ
ໃນວັນທີ 30 ກັນຍາ 2021

	ບົດ ອະທິບາຍ	ທົບທວນຄືນ 30 ກັນຍາ 2021 ກີບ	ກວດສອບ 31 ທັນວາ 2020 ກີບ
ໜີ້ສິນ ແລະ ທຶນເຈົ້າຂອງ			
ໜີ້ສິນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງທາງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ	11	2.232.806.002	4.074.936.044
ໜີ້ສິນພາຍໃຕ້ສັນຍາເຊົ່າທາງການເງິນ	12	-	78.339.545
ໜີ້ຕ້ອງສົ່ງອາກອນລາຍໄດ້		2.088.486.887	1.722.492.613
ໜີ້ສິນໝຸນວຽນອື່ນໆ		27.419.624	26.759.480
ລວມໜີ້ສິນໝຸນວຽນ		**4.348.712.513**	**5.902.527.682**
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຢືມໄລຍະຍາວ	13	17.044.800.000	11.936.400.000
ໜີ້ສິນບໍ່ໝຸນວຽນອື່ນໆ		231.000.000	140.375.000
ລວມໜີ້ສິນບໍ່ໝຸນວຽນ		**17.275.800.000**	**12.076.775.000**
ລວມໜີ້ສິນ		**21.624.512.513**	**17.979.302.682**
ທຶນເຈົ້າຂອງ			
ທຶນຈົດທະບຽນ	14	40.000.000.000	40.000.000.000
ສ່ວນເພີ່ມມູນຄ່າຮຸ້ນ	14	12.832.667.550	12.832.667.550
ກຳໄລສະສົມ			
ຄ້າງສະສົມຕາມລະບຽບການ		4.026.672.320	4.026.672.320
ກຳໄລສະສົມ ທີ່ຍັງບໍ່ໄດ້ຈັດສັນ		13.868.609.776	13.900.722.075
ລວມທຶນ		**70.727.949.646**	**70.760.061.945**
ລວມໜີ້ສິນ ແລະ ທຶນເຈົ້າຂອງ		92.352.462.159	88.739.364.627

ທ່ານ ນາງ ຫ. ຕຣີ ດາວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 5 ພະຈິກ 2021

ທ່ານນາງ ສຸລິພອນ ສຸວັນໄຊລິບ
ຜູ້ຈັດການພະແນກບັນຊີ

ວັນທີ: 5 ພະຈິກ 2021

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 8 - 17 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ.

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານຜົນໄດ້ຮັບ
ສຳລັບໄລຍະສາມເດືອນ ຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2021

	ບົດອະທິບາຍ	ທົບທວນຄືນ 1 ກໍລະກົດ -30 ກັນຍາ 2021 ກີບ	ທົບທວນຄືນ 1 ກໍລະກົດ -30 ກັນຍາ 2020 ກີບ
ລາຍຮັບຈາກດອກເບ້ຍ - ສັນຍາເຊົ່າການເງິນ ແລະ ສິນເຊື່ອຜ່ອນຊຳລະ		6.585.268.972	5.795.033.285
ລວມລາຍຮັບ		**6.585.268.972**	**5.795.033.285**
ລາຍຮັບອື່ນ		310.664.587	318.992.905
ລາຍຈ່າຍໃນການບໍລິຫານ		(3.631.209.787)	(3.118.584.667)
ໜີ້ເສຍ ແລະ ໜີ້ຕ້ອງຮັບທວງຍາກ		(357.517.148)	(239.645.729)
ຂາດທຶນສຸດທິຈາກອັດຕາແລກປ່ຽນ		(423.579.136)	(356.338.288)
ກຳໄລຈາກການດຳເນີນງານ		**2.483.627.488**	**2.399.457.506**
ລາຍຈ່າຍການເງິນ		(505.293.850)	(524.864.839)
ກຳໄລສຸດທິກ່ອນອາກອນ		**1.978.333.638**	**1.874.592.667**
ລາຍຈ່າຍອາກອນ	17	(354.966.758)	(372.447.341)
ກຳໄລສຸດທິ		**1.623.366.880**	**1.502.145.326**
ກຳໄລ ຕໍ່ຮຸ້ນ			
ກຳໄລ ພື້ນຖານ ຕໍ່ຮຸ້ນ	15	4,06	3,76

ທ່ານ ມານີ ທຣີດີວົໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 5 ພະຈິກ 2021

ທ່ານນາງ ສຸລິພອນ ສຸວັນໄຊລິບ
ຜູ້ຈັດການພະແນກບັນຊີ

ວັນທີ: 5 ພະຈິກ 2021

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 8 - 17 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ.

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບໄລຍະສາມເດືອນ ຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2021

	ບິດ ອະທິບາຍ	ທຶນຈົດທະບຽນ ກີບ	ສ່ວນເພີ່ມມູນຄ່າຮຸ້ນ ກີບ	ກຳໄລສະສົມ ຈັດສັນ ຄ້າງສະສົມຕາມລະບຽບການ ກີບ	ກຳໄລສະສົມ ທີ່ຍັງບໍ່ໄດ້ຈັດສັນ ກີບ	ລວມ ກີບ
ໃນວັນທີ 1 ມັງກອນ 2020		40.000.000.000	12.832.667.550	3.252.194.002	11.095.260.410	67.180.121.962
ກຳໄລ	15	-	-	-	1.502.145.326	1.502.145.326
ໃນວັນທີ 30 ກັນຍາ 2020		**40.000.000.000**	**12.832.667.550**	**3.252.194.002**	**12.597.405.736**	**68.682.267.288**
ໃນວັນທີ 1 ມັງກອນ 2021		40.000.000.000	12.832.667.550	4.026.672.320	12.245.242.896	69.104.582.766
ກຳໄລ	15	-	-	-	1.623.366.880	1.623.366.880
ໃນວັນທີ 30 ກັນຍາ 2021		**40.000.000.000**	**12.832.667.550**	**4.026.672.320**	**13.868.609.776**	**70.727.949.646**

ທ່ານ ພາພັນ ຕຣີຊົດວິໄລ
ຜູ້ອຳນວຍການໃຫຍ່

ວັນທີ: 5 ພະຈິກ 2021

ທ່ານນາງ ສຸລິພອນ ສຸວັນໄຊລິບ
ຜູ້ຈັດການພະແນກບັນຊີ

ວັນທີ: 5 ພະຈິກ 2021

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 8 - 17 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

ໃບລາຍງານກະແສເງິນສົດ
ສຳລັບໄລຍະສາມເດືອນ ຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2021

	ບົດອະທິບາຍ	ທີ່ຍທວນຄືນ 1 ກໍລະກົດ -30 ກັນຍາ 2021 ກີບ	ທີ່ຍທວນຄືນ 1 ກໍລະກົດ -30 ກັນຍາ 2020 ກີບ
ກະແສເງິນສົດຈາກກິດຈະກຳການດຳເນີນງານ:			
ກຳໄລກ່ອນອາກອນ		1.978.333.638	1.874.592.667
ດັດແກ້ເພື່ອສົມທຽບກຳໄລສຸດທິ ແລະ ເງິນສົດສຸດທິ			
ໜີ້ເສຍ ແລະ ໜີ້ຕ້ອງຮັບທວງຍາກ		357.517.148	239.645.729
ຄ່າບາຍໜ້າລໍຖ້າຕັດບັນຊີ		968.159.301	979.334.622
ການສູນເສຍມູນຄ່າຂອງຊັບສິນຖືໄວ້ເພື່ອຂາຍ		(48.750.000)	3.750.000
ຄ່າຫຼຸ້ຍຫ້ຽນ		124.394.943	134.094.009
ລາຍຈ່າຍດອກເບ້ຍ		505.293.850	524.864.839
ລາຍຈ່າຍອາກອນ		(354.966.758)	(372.447.341)
ຂາດທຶນຈາກອັດຕາແລກປ່ຽນທີ່ບໍ່ເກີດຂຶ້ນຈິງ		407.983.954	251.507.737
ກຳໄລ ຈາກການດຳເນີນງານກ່ອນການປ່ຽນແປງທຶນໝຸນວຽນ		**3.937.966.076**	**3.635.342.262**
ການປ່ຽນແປງທຶນໝຸນວຽນ:			
ໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ		(1.128.658.141)	1.777.576.793
ຊັບສິນຖືໄວ້ເພື່ອຂາຍ		406.540.382	(56.073.635)
ຊັບສິນໝຸນວຽນອື່ນໆ		(70.762.230)	301.152.774
ຊັບສິນບໍ່ໝຸນວຽນອື່ນໆ		(6.358.308)	-
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		(264.164.205)	197.323.271
ໜີ້ສິນໝຸນວຽນອື່ນໆ		80.255	625.040
ໜີ້ຕ້ອງສົ່ງອາກອນລາຍໄດ້		354.966.758	372.447.341
ໜີ້ສິນບໍ່ໝຸນວຽນອື່ນໆ		19.750.000	20.125.000
ເງິນສົດຈາກກິດຈະກຳດຳເນີນງານ		**3.249.360.587**	**6.248.518.846**
ລາຍຈ່າຍຄ່າບາຍໜ້າ		(908.350.000)	(906.600.000)
ລາຍຈ່າຍດອກເບ້ຍ		(505.293.850)	(529.309.569)
ລາຍຈ່າຍອາກອນ		(440.000.000)	(480.000.000)
ເງິນສົດສຸດທິຈາກ/(ໃຊ້ໄປໃນ)ກິດຈະກຳດຳເນີນງານ		**1.395.716.737**	**4.332.609.277**
ກະແສເງິນສົດຈາກກິດຈະກຳການລົງທຶນ			
ເງິນສົດຈ່າຍຊື້ຊັບສິນບັດຄົງທີ່ມີຕົວຕົນ		(103.687.150)	(43.451.091)
ເງິນສົດສຸດທິໃຊ້ໄປໃນກິດຈະກຳການລົງທຶນ		**(103.687.150)**	**(43.451.091)**

ທ່ານ ນາທີ ຄຣີສົດວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 5 ພະຈິກ 2021

ທ່ານນາງ ສຸລິພອນ ສຸວັນໄຊລິບ
ຜູ້ຈັດການພະແນກບັນຊີ

ວັນທີ: 5 ພະຈິກ 2021

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 8 - 17 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

ໃບລາຍງານກະແສເງິນສົດ
ສຳລັບໄລຍະສາມເດືອນ ຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2021

	ບົດອະທິບາຍ	ທົບທວນຄືນ 1 ກໍລະກົດ -30 ກັນຍາ 2021 ກີບ	ທົບທວນຄືນ 1 ກໍລະກົດ -30 ກັນຍາ 2020 ກີບ
ກະແສເງິນສົດຈາກກິດຈະກຳການເງິນ			
ເງິນສົດໄດ້ຮັບຈາກເງິນກູ້ຢືມ		4.083.200.000	-
ຈ່າຍຄືນເງິນກູ້ຢືມ		-	(3.888.600.000)
ຊຳລະຄືນໜີ້ສິນ ພາຍໃຕ້ສັນຍາເຊົ່າທາງການເງິນ		-	(11.713.370)
ເງິນສົດສຸດທິຈາກ(ໃຊ້ໄປໃນ)ກິດຈະກຳການເງິນ		**4.083.200.000**	**(3.900.313.370)**
ຍອດຍົກມາຕົ້ນປີ ແລະ ລາຍການທຽບເທົ່າເງິນສົດ		**5.375.229.587**	**388.844.816**
ເງິນສົດ ແລະ ລາຍການທຽບເທົ່າເງິນສົດຕົ້ນປີ		4.634.812.131	10.112.526.489
ກຳໄລ/(ຂາດທຶນ) ໃນການແລກປ່ຽນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		16.277.883	8.986.895
ເງິນສົດ ແລະ ລາຍການທຽບເທົ່າເງິນສົດທ້າຍປີ		**10.026.319.601**	**10.510.358.200**

ທ່ານ ນາມ ຕຣີລັກວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 5 ພະຈິກ 2021

ທ່ານນາງ ສຸລິພອນ ສຸວັນໄຊລິບ
ຜູ້ຈັດການພະແນກບັນຊີ

ວັນທີ: 5 ພະຈິກ 2021

1 ຂໍ້ມູນທົ່ວໄປ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ບໍລິສັດ) ແມ່ນ ບໍລິສັດທີ່ໄດ້ຈົດທະບຽນໃນຕະຫລາດຫຼັກຊັບລາວ ແລະ ທີ່ໄດ້ຈົດທະບຽນຕັ້ງຢູ່ໃນ ສປປ ລາວ. ບໍລິສັດໄດ້ຈົດທະບຽນສ້າງຕັ້ງ ກັບກະຊວງອຸດສາຫະກຳ ແລະ ການຄ້າ ໃນວັນທີ 2 ກັນຍາ 2011. ບໍລິສັດໄດ້ເລີ່ມດຳເນີນທຸລະກິດພາຍຫຼັງທີ່ໄດ້ຮັບໃບອະນຸຍາດຈາກທະນາຄານແຫ່ງສປປ ລາວ ໃນວັນທີ 11 ມິຖຸນາ 2012.

ເມື່ອວັນທີ 13 ມິຖຸນາ 2018, ບໍລິສັດ ໄດ້ຮັບອະນຸຍາດຈາກຄະນະກຳມະການຄຸ້ມຄອງຫຼັກຊັບລາວ ໃຫ້ຈຳໜ່າຍຮຸ້ນແກ່ປະຊາຊົນທົ່ວໄປເປັນຄັ້ງທຳອິດ.

ສຳນັກງານໃຫຍ່ຂອງບໍລິສັດ ຕັ້ງຢູ່ເຮືອນເລກທີ 628, ບ້ານໂພນພະເນົາ, ກິໂລແມັດ 5, ຖະໜົນໄກສອນພົມວິຫານ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.

ກິດຈະກຳຫຼັກ ຂອງບໍລິສັດແມ່ນການສະໜອງສິນເຊື່ອສຳລັບລູກຄ້າລາຍຍ່ອຍໂດຍການໃຫ້ສິນເຊື່ອແກ່ລູກຄ້າລາຍບຸກຄົນເພື່ອຊື້ລົດຈັກແລະລົດໄຖ

ເອກະສານລາຍງານການເງິນ ໄດ້ມີການອະນຸມັດໃຫ້ອອກບົດລາຍງານ ໂດຍຄະນະບໍລິຫານໃນວັນທີ 5 ພະຈິກ 2021

2 ພື້ນຖານໃນການກະກຽມບົດລາຍງານ ແລະ ນະໂຍບາຍການບັນຊີ

ເອກະສານລາຍງານການເງິນກາງປີໄດ້ຖືກສ້າງຂຶ້ນໂດຍອີງຕາມນະໂຍບາຍການບັນຊີ ຂອງບໍລິສັດດັ່ງທີ່ໄດ້ອະທິບາຍໄວ້ໃນລາຍລະອຽດເພີ່ມເຕີມໃນເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2020. ເອກະສານລາຍງານການເງິນຫຼັກເຊັ່ນ: ໃບລາຍງານຖານະການເງິນ, ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນຂອງຕົນເອງ ແລະ ໃບລາຍງານກະແສເງິນສົດ ຖືກນຳສະເໜີໃນຮູບແບບທີ່ສອດຄ່ອງກັບເອກະສານລາຍງານການເງິນປະຈຳປີໂດຍປະຕິບັດຕາມລະບຽບການລາຍງານ ແລະ ການເປີດເຜີຍທີ່ອອກໂດຍ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ເອກະສານລາຍງານການເງິນສະບັບນີ້ ຄວນອ່ານຄູ່ກັບເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດ 31 ທັນວາ 2020.

ຫຼັກການບັນຊີທີ່ນຳໃຊ້ອາດຈະແຕກຕ່າງຈາກມາດຕະຖານການລາຍງານການເງິນສາກົນ (IFRS). ໃນຂອບເຂດທີ່ມີຄວາມແຕກຕ່າງທີ່ມີສາລະສຳຄັນເຊັ່ນ, ສັນຍາເຊົ່າ, ຜົນປະໂຫຍດຂອງພະນັກງານ, ຜົນກະທົບຂອງການປ່ຽນແປງຂອງອັດຕາແລກປ່ຽນເງິນຕາຕ່າງປະເທດ, ອາກອນລາຍໄດ້ ແລະ ອາກອນລາຍໄດ້ເລື່ອນຊຳລະ, ເຄື່ອງມືການເງິນ ແລະ ຄ່າໃຊ້ຈ່າຍກ່ອນການດຳເນີນງານ.

ໃນການກະກຽມເອກະສານລາຍງານການເງິນ ຮຽກຮ້ອງໃຫ້ຜູ້ບໍລິຫານຕ້ອງໃຊ້ການຄາດຄະເນ ແລະ ຕັ້ງຂໍ້ສົມມຸດທີ່ມີຜົນກະທົບຕໍ່ຊັບສິນ ແລະ ໜີ້ສິນທີ່ຖືກລາຍງານ, ການເປີດເຜີຍຊັບສິນ ແລະ ໜີ້ສິນທີ່ອາດເກີດຂຶ້ນ ໃນວັນທີຂອງເອກະສານລາຍງານການເງິນ, ລາຍຮັບ ແລະ ລາຍຈ່າຍໃນໄລຍະເວລາທີ່ລາຍງານ, ເຖິງແມ່ນວ່າການຄາດຄະເນເຫຼົ່ານີ້ແມ່ນອີງໃສ່ຄວາມຮູ້ຂອງຜູ້ບໍລິຫານກ່ຽວກັບເຫດການ ແລະ ການກະທຳໃນປະຈຸບັນກໍ່ຕາມ, ແຕ່ຜົນໄດ້ຮັບຕົວຈິງອາດຈະແຕກຕ່າງຈາກການຄາດຄະເນເຫຼົ່ານັ້ນ.

3 ເຫດການທີ່ສຳຄັນໃນໄລຍະປະຈຸບັນ

ການຕິດເຊື້ອພະຍາດ COVID-19 ໃນປະເທດລາວມີການເພີ່ມຂຶ້ນຢ່າງເປັນສາລະສຳຄັນໃນຊ່ວງເດືອນ ເມສາ 2021 ນຳໄປສູ່ການຫ້າມບຸກຄົນເດີນທາງ ເຂົ້າ - ອອກ ນະຄອນຫຼວງວຽງຈັນ ແລະ ບັນດາແຂວງອື່ນໆໃນປະເທດລາວ. ການເພີ່ມຂຶ້ນຢ່າງມີສາລະສຳຄັນຂອງການຕິດເຊື້ອນີ້ຖືວ່າເປັນການແຜ່ລະບາດຮອບທີສອງ ໂດຍລັດຖະບານໄດ້ມີມາດຕະການທີ່ເຂັ້ມງວດຂຶ້ນເພື່ອຄວບຄຸມ ແລະ ສະກັດກັ້ນການແຜ່ລະບາດຂອງເຊື້ອພະຍາດ ເຊິ່ງໄດ້ສົ່ງຜົນກະທົບຕໍ່ກິດຈະກຳທາງເສດຖະກິດ.

ບໍລິສັດໄດ້ປະຕິບັດຫຼາຍມາດຕະການເພື່ອສະໜັບສະໜຸນລູກຄ້າ, ຜູ້ທີ່ໄດ້ຮັບຜົນກະທົບຈາກການລະບາດຂອງ COVID-19, ໂດຍປະຕິບັດຕາມມາດຕະການບັນເທົາທຸກຂອງທະນາຄານແຫ່ງ ສປປ ລາວ ເພື່ອຊ່ວຍເຫຼືອລູກໜີ້ ທີ່ໄດ້ຮັບຜົນກະທົບຈາກສະຖານະການສະພາບເສດຖະກິດຂອງລາວ, ໂດຍໃຫ້ໄລຍະຜ່ອນຜັນ ສຳລັບຕົ້ນທຶນ ແລະ ດອກເບ້ຍ ແລະ ອັດຕາຫຼຸດຜ່ອນຕາມເງື່ອນໄຂ ແລະ ຂໍ້ກຳນົດທີ່ບໍລິສັດກຳນົດ.

ຜູ້ບໍລິຫານຈະສືບຕໍ່ຕິດຕາມການພັດທະນາຢ່າງຕໍ່ເນື່ອງ ແລະ ປະເມີນຜົນກະທົບຂອງຂໍ້ມູນທາງການເງິນກ່ຽວກັບການປະເມີນມູນຄ່າຊັບສິນ, ການສຳຮອງໜີ້ເສຍ ແລະ ໜີ້ສິນທີ່ອາດເກີດຂຶ້ນຢ່າງສະໝ່ຳສະເໝີ.

4 ການຄາດຄະເນ

ການສ້າງເອກະສານລາຍງານການເງິນ ແມ່ນຮຽກຮ້ອງໃຫ້ຜູ້ບໍລິຫານໃຊ້ດຸນຍິນິດ, ການຄາດຄະເນ ແລະ ການສົມມຸດຕິຖານທີ່ມີຜົນກະທົບຕໍ່ນະໂຍບາຍການບັນຊີ ແລະ ການລາຍງານຕົວເລກ ຂອງຊັບສິນ ແລະ ໜີ້ສິນ, ລາຍຮັບ ແລະ ລາຍຈ່າຍ ເຊິ່ງໃນຄວາມເປັນຈິງອາດຈະມີຄວາມແຕກຕ່າງຈາກການຄາດຄະເນໄວ້.

ໃນການກະກຽມເອກະສານລາຍງານສະບັບນີ້, ຜູ້ບໍລິຫານໄດ້ຕັດສິນໃຈທີ່ມີສາລະສຳຄັນຂອງນະໂຍບາຍການບັນຊີ ຂອງບໍລິສັດ ແລະ ແຫຼ່ງທີ່ມາທີ່ສຳຄັນຂອງຄວາມບໍ່ແນ່ນອນຂອງການປະມານການເຊັ່ນດຽວກັບທີ່ໃຊ້ກັບເອກະສານລາຍງານການເງິນສຳລັບປີສິ້ນສຸດວັນທີ 31 ທັນວາ 2020.

5 ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

	ທົບທວນຄືນ 30 ກັນຍາ 2021 ກີບ	ກວດສອບ 31 ທັນວາ 2020 ກີບ
ເງິນສົດໃນມື	24.136.216	65.894.780
ເງິນສົດໃນທະນາຄານ	10.002.183.385	12.338.458.543
ລວມ	**10.026.319.601**	**12.404.353.323**

6 ໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ, ສຸດທິ

	ທົບທວນຄືນ 30 ກັນຍາ 2021 ກີບ	ກວດສອບ 31 ທັນວາ 2020 ກີບ
ໝຸນວຽນ		
ສັດສ່ວນໝຸນວຽນຂອງໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ	1.178.479.522	1.417.264.839
ສັດສ່ວນໝຸນວຽນຂອງລູກໜີ້ສິນເຊື່ອຜ່ອນຊຳລະ	49.318.060.861	47.733.016.741
	50.496.540.383	**49.150.281.580**
ເພີ່ມ ຕົ້ນທຶນທາງກົງ	1.376.290.939	1.447.725.719
ຫັກ ເງິນແຮະບ້ອງໜີ້ຕ້ອງຮັບທີ່ເກັບຄືນບໍ່ໄດ້	(3.907.724.816)	(3.185.133.419)
	47.965.106.506	**47.412.873.880**
ບໍ່ໝຸນວຽນ		
ໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ	194.497.355	207.374.737
ລູກໜີ້ສິນເຊື່ອຜ່ອນຊຳລະ	29.671.958.891	24.401.024.077
	29.866.456.246	**24.608.398.814**
ເພີ່ມ ຕົ້ນທຶນທາງກົງ	1.269.850.198	1.126.739.763
ຫັກ ເງິນແຮະບ້ອງໜີ້ຕ້ອງຮັບທີ່ເກັບຄືນບໍ່ໄດ້	(547.426.186)	(432.556.356)
	30.588.880.258	**25.302.582.221**
ລວມ	**78.553.986.764**	**72.715.456.101**

ໃນວັນທີ 30 ກັນຍາ 2021, ໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ໜີ້ຕ້ອງຮັບເງິນກູ້ຜ່ອນຊຳລະໃນໃບລາຍງານຖານະການເງິນ, ສາມາດວິເຄາະອາຍຸການໄດ້ດັ່ງນີ້:

	ທົບທວນຄືນ 30 ກັນຍາ 2021 ກີບ	ກວດສອບ 31 ທັນວາ 2020 ກີບ
ບໍ່ຄົບກຳນົດ	55.953.432.967	54.414.161.391
1 - 3 ເດືອນ	18.852.215.931	14.672.370.031
4 - 5 ເດືອນ	1.236.688.753	1.145.245.622
6 - 12 ເດືອນ	1.355.994.095	1.297.787.808
ເກີນ 12 ເດືອນ	2.964.664.883	2.229.115.542
	80.362.996.629	**73.758.680.394**
ເພີ່ມ ຕົ້ນທຶນທາງກົງ	2.646.141.137	2.574.465.482
ຫັກ ເງິນແຮະບ້ອງໜີ້ຕ້ອງຮັບທີ່ເກັບຄືນບໍ່ໄດ້	(4.455.151.002)	(3.617.689.775)
ລວມ	**78.553.986.764**	**72.715.456.101**

7 ຊັບສິນຖືໄວ້ເພື່ອຂາຍ, ສຸດທິ

	ທີບທວນຄືນ 30 ກັນຍາ 2021 ກີບ	ກວດສອບ 31 ທັນວາ 2020 ກີບ
ລິດຈັກ	311.665.744	211.320.860
ຫັກ ເງິນແຮການສູນເສຍມູນຄ່າຂອງຊັບສິນຖືໄວ້ເພື່ອຂາຍ	(32.500.000)	(23.750.000)
ລວມ	**279.165.744**	**187.570.860**

8 ຊັບສິນໝຸນວຽນອື່ນໆ

	ທີບທວນຄືນ 30 ກັນຍາ 2021 ກີບ	ກວດສອບ 31 ທັນວາ 2020 ກີບ
ລາຍຈ່າຍລ່ວງໜ້າ	328.487.771	292.490.017
ຊຳລະເງິນລ່ວງໜ້າ	17.245.050	9.239.640
ໜີ້ຕ້ອງຮັບອາກອນມູນຄ່າເພີ່ມ	-	8.633.089
ອື່ນໆ	32.474.000	24.218.849
ລວມ	**378.206.821**	**334.581.595**

9 ຊັບສິນຄົງທີ່ມີຕົວຕົນ, ສຸດທິ

	ກີບ
ໃນວັນທີ 1 ມັງກອນ 2021 - ກວດສອບ	1.037.381.048
ເພີ່ມຂຶ້ນ	116.440.210
ຫັກ: ຄ່າຫຼຸ້ຍຫ້ຽນ	(369.813.398)
ມູນຄ່າຕາມບັນຊີສຸດທິ ໃນວັນທີ 30 ກັນຍາ 2021 - ທີບທວນຄືນ	**784.007.860**

10 ຊັບສິນບໍ່ມີຕົວຕົນ, ສຸດທິ

	ກີບ
ໃນວັນທີ 1 ມັງກອນ 2021 - ກວດສອບ	60.019.000
ເພີ່ມຂຶ້ນ	144.951.000
ຫັກ: ຄ່າເສື່ອມມູນຄ່າ	5.351.191
ມູນຄ່າຕາມບັນຊີສຸດທິ ໃນວັນທີ 30 ກັນຍາ 2021 - ທີບທວນຄືນ	**199.618.809**

11 ໜີ້ຕ້ອງສົ່ງທາງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ

	ທົບທວນຄືນ 30 ກັນຍາ 2021 ກີບ	ກວດສອບ 31 ທັນວາ 2020 ກີບ
ໜີ້ຕ້ອງສົ່ງທາງການຄ້າ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍ 18)	-	190.075.000
ໜີ້ຕ້ອງສົ່ງທາງການຄ້າ	1.049.427.000	2.179.740.000
ໜີ້ຕ້ອງສົ່ງອື່ນໆ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍ18)	5.940.000	28,136,000
ໜີ້ຕ້ອງສົ່ງອາກອນ	59.085.039	52.852.813
ຄ່າໃຊ້ຈ່າຍຄ້າງຈ່າຍ	1.118.353.963	1.624.132.231
ລວມ	**2.232.806.002**	**4.074.936.044**

12 ໜີ້ສິນພາຍໃຕ້ສັນຍາເຊົ່າທາງການເງິນ

	ທົບທວນຄືນ 30 ກັນຍາ 2021 ກີບ	ກວດສອບ 31 ທັນວາ 2020 ກີບ
ສັດສ່ວນໜີ້ສິນພາຍໃຕ້ສັນຍາເຊົ່າທາງການເງິນ	-	78.339.545
ລວມ	**-**	**78.339.545**

ລາຍການເຄື່ອນໄຫວຂອງໜີ້ສິນພາຍໃຕ້ສັນຍາເຊົ່າທາງການເງິນ ສຳລັບໄລຍະເກົ້າເດືອນຕົ້ນປີສິ້ນສຸດ ວັນທີ 30 ມິຖຸນາ 2021 ມີ ດັ່ງລຸ່ມນີ້:

	ທົບທວນຄືນ 30 ກັນຍາ 2021 ກີບ	ກວດສອບ 31 ທັນວາ 2020 ກີບ
ຍອດຍົກມາມູນຄ່າຕາມສັນຍາ, ສຸດທິ	78.339.545	128.961.814
ຊຳລະຄືນ	(78.339.545)	(50.622.269)
ຍອດເຫຼືອມູນຄ່າຕາມບັນຊີ, ສຸດທິ	**-**	**78.339.545**

13 ເງິນກູ້ຢືມໄລຍະຍາວ

	ທົບທວນຄືນ 30 ກັນຍາ 2021 ກີບ	ກວດສອບ 31 ທັນວາ 2020 ກີບ
ເງິນກູ້ຢືມຈາກທະນາຄານ	17.044.800.000	11.936.400.000
ລວມ	**17.044.800.000**	**11.936.400.000**

ລາຍການເຄື່ອນໄຫວຂອງເງິນກູ້ຢືມ ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດ ວັນທີ 30 ມິຖຸນາ 2021 ມີດັ່ງລຸ່ມນີ້:

	ທົບທວນຄືນ 30 ກັນຍາ 2021 ກີບ	ກວດສອບ 31 ທັນວາ 2020 ກີບ
ຍອດຍົກມາມູນຄ່າຕາມບັນຊີ, ສຸດທິ	11.936.400.000	20.100.000.000
ເງິນກູ້ຢືມທີ່ເພີ່ມ	4.083.200.000	14.433.600.000
ຊຳລະເງິນກູ້ຢືມຄືນ	-	(23.028.600.000)
ຂາດທຶນຈາກການຕີມູນຄ່າການແລກປ່ຽນ	1.025.200.000	431.400.000
ຍອດເຫຼືອມູນຄ່າຕາມບັນຊີ, ສຸດທິ	**17.044.800.000**	**11.936.400.000**

ເງິນກູ້ຢືມແມ່ນຄ້ຳປະກັນໂດຍ ບໍລິສັດ ມະຫະທຸນ ໂຮນດິ້ງຈຳກັດ ເຊິ່ງເປັນ 1 ໃນຜູ້ຖືຮຸ້ນ ເຊິ່ງມີກຳນົດຊຳລະຄືນໃນປີ 2023

14 ທຶນ ແລະ ສ່ວນເພີ່ມມູນຄ່າຮຸ້ນ

	ມູນຄ່າຕໍ່ໃບຮຸ້ນ (ກີບ)	ທົບທວນຄືນ 30 ກັນຍາ 2021		ກວດສອບ 31 ທັນວາ 2020	
		ຈຳນວນໃບ	ກີບ	ຈຳນວນໃບ	ກີບ
ຮຸ້ນທີ່ໄດ້ຮັບອະນຸມັດ					
- ຮຸ້ນສາມັນ	1.000	-	-	40.000.000	40.000.000.000
- ຮຸ້ນສາມັນ	100	400.000.000	40.000.000.000	-	-
ຮຸ້ນທີ່ອອກ ແລະ ຖອກແລ້ວ ຕົ້ນງວດ					
- ຮຸ້ນສາມັນ	1.000	-	-	40.000.000	40.000.000.000
- ລຸດມູນຄ່າກຳນົດຈາກ 1.000 ກີບ ມາເປັນ 100 ກີບ	100	400.000.000	40.000.000.000	-	-
ຍອດເຫຼືອມູນຄ່າຕາມບັນຊີ					
ຮຸ້ນສາມັນ	**1.000**	**-**	**-**	**40.000.000**	**40.000.000.000**
ຮຸ້ນສາມັນ	**100**	**400.000.000**	**40.000.000.000**	**-**	**-**

ໃນວັນທີ 4 ທັນວາ 2020, ໃນກອງປະຊຸມຜູ້ຖືຮຸ້ນສາມັນທົ່ວໄປ ຄັ້ງທີ 1, ຜູ້ຖືຮຸ້ນໄດ້ຜ່ານມະຕິຕົກລົງເພື່ອອະນຸມັດການປ່ຽນແປງ ມູນຄ່າໃນໃບຮຸ້ນ ຂອງບໍລິສັດ ຈາກລາຄາ 1.000 ກີບ ມາເປັນ 100 ກີບຕໍ່ຮຸ້ນ, ຈຳນວນຮຸ້ນສາມັນໄດ້ເພີ້ມຈາກ 40.000.000 ຮຸ້ນ ມາເປັນ 400.000.000 ຮຸ້ນ.

ບໍລິສັດໄດ້ຈົດທະບຽນປ່ຽນແປງຈຳນວນ ແລະ ລາຄາຮຸ້ນກັບກະຊວງອຸດສາຫະກຳ ແລະ ການຄ້າແລ້ວ ໃນວັນທີ 24 ມິຖຸນາ 2021

15 ກຳໄລພື້ນຖານຕໍ່ຮຸ້ນ

ກຳໄລ ພື້ນຖານ ຕໍ່ຮຸ້ນ ແມ່ນຄິດໄລ່ໂດຍການຫານກຳໄລສຸດທິ ທີ່ເປັນຂອງຜູ້ຖືຮຸ້ນໂດຍສະເລ່ຍຕາມຈຳນວນຂອງຮຸ້ນສາມັນ ທີ່ອອກໃນລະຫວ່າງໄລຍະ, ປັບປຸງຕາມຜົນກະທົບຈາກການປ່ຽນແປງຂອງມູນຄ່າໃນໃບຮຸ້ນ ເພື່ອປຽບທຽບດັ່ງຕໍ່ໄປນີ້:

	ທົບທວນຄືນ	ທົບທວນຄືນ	
	1 ກໍລະກົດ -30 ກັນຍາ	1 ກໍລະກົດ -30 ກັນຍາ	
	2021	2020	
		ຫຼັງການປ່ຽນ ມູນຄ່າກຳນົດ	ກ່ອນການປ່ຽນ ມູນ ຄ່າກຳນົດ
ກຳໄລສຸດທິທີ່ເປັນຂອງຜູ້ຖືຮຸ້ນສາມັນ (ກີບ)	1.623.366.880	1.502.145.327	1.502.145.327
ສະເລ່ຍຕາມຈຳນວນຂອງຮຸ້ນສາມັນທີ່ອອກ (ຮຸ້ນ)	400.000.000	400.000.000	40.000.000
ກຳໄລພື້ນຖານຕໍ່ຮຸ້ນ (ກີບ)	4,06	3,76	37,55

ເພື່ອຈຸດປະສົງໃນການປຽບທຽບ ບໍລິສັດໄດ້ນຳສະເໜີໃຫ້ເຫັນວ່າກຳໄລພື້ນຖານຕໍ່ຮຸ້ນ ໃນວັນທີ 1 ກໍລະກົດ - 30 ກັນຍາ 2020 ຈະມີການປ່ຽນແປງຖ້າຫາກປີທີ່ແລ້ວມີການປ່ຽນມູນຄ່າກຳນົດ ແລະ ຈຳນວນຮຸ້ນ.

16 ເງິນປັນຜົນ

ໃນກອງປະຊຸມຜູ້ຖືຮຸ້ນສາມັນປະຈຳປີ 2019 ໃນວັນທີ 29 ເມສາ 2020, ຜູ້ຖືຮຸ້ນໄດ້ອະນຸມັດການຈ່າຍເງິນປັນຜົນປະຈຳປີຈາກ ກຳໄລສຸດທິ 12 ເດືອນ ໄລຍະສິ້ນສຸດ ວັນທີ 31 ທັນວາ 2019 ໃນມູນຄ່າ 100 ກີບຕໍ່ຮຸ້ນ, ລວມມູນຄ່າທັງ ໝົດ 4.000 ລ້ານກີບ ແລະ ຈັດສັນກຳໄລສຸດທິເພື່ອສຳຮອງຕາມກົດໝາຍ ຈຳນວນເງິນ 808.458.495 ກີບ.

ໃນກອງປະຊຸມຜູ້ຖືຮຸ້ນສາມັນປະຈຳປີ 2020 ໃນວັນທີ 27 ເມສາ 2021, ຜູ້ຖືຮຸ້ນໄດ້ອະນຸມັດການຈ່າຍເງິນປັນຜົນປະຈຳປີຈາກ ກຳໄລສຸດທິ 12 ເດືອນ ໄລຍະສິ້ນສຸດ ວັນທີ 31 ທັນວາ 2020 ໃນມູນຄ່າ 155 ກີບຕໍ່ຮຸ້ນ, ລວມມູນຄ່າ 6.200 ລ້ານກີບ ແລະ ຈັດສັນກຳໄລສຸດທິ ເພື່ອສຳຮອງຕາມກົດໝາຍຈຳນວນເງິນ 774.478.318 ກີບ.

17 ອາກອນລາຍໄດ້

ບໍລິສັດໄດ້ຮັບສິດທິພິເສດຕາມກົດໝາຍສ່ວຍສາອາກອນລາວໂດຍການຫຼຸດອັດຕາອາກອນກຳໄລ 5% ຂອງອັດຕາປົກກະຕິເປັນ ເວລາ 4ປີ ນັບຕັ້ງແຕ່ວັນທີຈົດທະບຽນເຂົ້າຕະຫຼາດຫຼັກຊັບລາວ ວັນທີ 13 ມິຖຸນາ 2018.

ອີງຕາມກົດໝາຍສ່ວຍສາອາກອນ ສະບັບເລກທີ 259 ທີ່ມີຜົນບັງຄັບໃຊ້ໃນວັນທີ 1 ມັງກອນ 2020, ບໍລິສັດໄດ້ຄິດໄລ່ອາກອນ ກຳໄລ ທີ່ຕ້ອງເສຍອາກອນໃນອັດຕາ 13% ພາຍຫຼັງທີ່ພິຈາລະນາລາຍຮັບ ແລະ ລາຍຈ່າຍ ທີ່ບໍ່ສາມາດຫັກອອກໄດ້ ຕາມກົດໝາຍ ສ່ວຍສາອາກອນລາວ.

ຢູ່ໃນ ສປປ ລາວ, ການແຈ້ງຈ່າຍອາກອນລາຍໄດ້ຖືກກວດກາເປັນປົກກະຕິໂດຍລະອຽດ ຈາກເຈົ້າໜ້າທີ່ກ່ຽວຂ້ອງ. ນອກຈາກນັ້ນ, ບັນຫາດ້ານອາກອນທີ່ຖືກຍົກຂຶ້ນມາໃນການທົບທວນຄືນອາດຈະຕ້ອງມີການຕັດສິນ ແລະ ການຕີຄວາມທີ່ມີສາລະສຳຄັນ ຈາກ ພາກສ່ວນທີ່ກ່ຽວຂ້ອງ.

ການທົບທວນດັ່ງກ່າວ ອາດຈະເຮັດໃຫ້ມີການຈ່າຍອາກອນເພີ່ມເຕີມ ຫຼື ສົ່ງເງິນຄືນທີ່ເປັນສາລະສຳຄັນ ເຊິ່ງອາດຈະເປັນສິ່ງທີ່ສຳຄັນ ເຊິ່ງຈະສົ່ງຜົນໃຫ້ການຊຳລະ ຫຼື ຮັບຄືນໄດ້ຖືກຮັບຮູ້ວ່າເປັນການປັບອາກອນລາຍໄດ້ໃນປີທີ່ການທົບທວນຄືນ ສຳເລັດ.

18 ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ກ. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ ສຳລັບຫົກເດືອນຕົ້ນປີສິ້ນສຸດ ວັນທີ 30 ມິຖຸນາ 2021 ມີດັ່ງນີ້:

	ທົບທວນຄືນ 1 ກໍລະກົດ -30 ກັນຍາ 2021 ກີບ	ທົບທວນຄືນ 1 ກໍລະກົດ -30 ກັນຍາ 2020 ກີບ
ການຊື້ສິນຄ້າ ແລະ ບໍລິການ:		
ບໍລິສັດ ມະຫະທຸນ ໂຮນດິ້ງ ຈຳກັດ		
ຄ່າຄ້ຳປະກັນ	459.702.473	457.626.298
	459.702.473	**457.626.298**
ພາກສ່ວນທີ່ກ່ຽວຂ້ອງອື່ນໆ*		
ຊື້ຊັບສິນເຊົ່າສິນເຊື່ອ	1.255.300.000	1.626.343.000
ຈ່າຍຄ່ານາຍໜ້າ	71.250.000	102.000.000
ລາຍຈ່າຍການເງິນ	-	21.853.087
ລາຍຈ່າຍອື່ນໆ	25.110.000	14.114.000
	1.351.660.000	**1.764.310.087**
ລວມ	**1.811.362.473**	**2.221.936.385**

* ຜູ້ອຳນວຍການຂອງບໍລິສັດ ເປັນຜູ້ຖືຮຸ້ນໃນກິດຈະການ.

18 ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ຂ. ຍອດຄ້າງຊຳລະທີ່ເກີດຂຶ້ນຈາກການຂາຍ/ຊື້ ສິນຄ້າ/ບໍລິການ

	ທົບທວນຄືນ 30 ກັນຍາ 2021 ກີບ	ກວດສອບ 31 ທັນວາ 2020 ກີບ
ໜີ້ຕ້ອງສົ່ງ:		
ບໍລິສັດ ມະຫະທຸນ ໂຮນດິ້ງ ຈຳກັດ		
ໜີ້ຕ້ອງສົ່ງຄ່າຄ້ຳປະກັນ	-	367.549.304
	-	**367.549.304**
ພາກສ່ວນທີ່ກ່ຽວຂ້ອງອື່ນໆ*		
ໜີ້ຕ້ອງສົ່ງການຄ້າ	-	190.075.000
ໜີ້ຕ້ອງສົ່ງອື່ນໆ	5.940.000	28.136.000
	5.940.000	**218.211.000**
ລວມ	**5.940.000**	**585.760.304**

* ຜູ້ອຳນວຍການຂອງບໍລິສັດ ເປັນຜູ້ຖືຮຸ້ນໃນກິດຈະການ.

ຄ. ຄ່າຕອບແທນຜູ້ບໍລິຫານຫຼັກ

ຄ່າຕອບແທນໃຫ້ຜູ້ບໍລິຫານມີດັ່ງຕໍ່ໄປນີ້:

	ທົບທວນຄືນ 1 ກໍລະກົດ -30 ກັນຍາ 2021 ກີບ	ທົບທວນຄືນ 1 ກໍລະກົດ -30 ກັນຍາ 2020 ກີບ
ເງິນເດືອນ ແລະ ອື່ນໆ	202.750.000	209.043.456

19 ພາລະໜຸກພັນ

ພາລະໜຸກພັນຕາມສັນຍາເຊົ່າເພື່ອການດຳເນີນງານ

ບໍລິສັດ ມີພາລະໜຸກພັນຕາມສັນຍາເຊົ່າພື້ນທີ່ສຳນັກງານໄລຍະຍາວ ສຳລັບການເຊົ່າພື້ນທີຫ້ອງການ

ໃນວັນທີ 30 ກັນຍາ 2021 ແລະ ວັນທີ 31 ທັນວາ 2020, ພາລະໜຸກພັນຕາມສັນຍາເຊົ່າເພື່ອການດຳເນີນງານແຕ່ບໍ່ໄດ້ຮັບຮູ້ເປັນໜີ້ສິນມີດັ່ງນີ້:

	ທົບທວນຄືນ 30 ກັນຍາ 2021 ກີບ	ກວດສອບ 31 ທັນວາ 2020 ກີບ
ພາຍໃນ 1 ປີ	197.706.259	150.037.955
ເກີນ 1 ປີ ແຕ່ບໍ່ເກີນ 5 ປີ	1.302.670.621	1.381.246.738
ເກີນ 5 ປີ	45.733.810	362.514.661
ລວມ	**1.546.110.690**	**1.893.799.354**

20 ເຫດການເກີດຂຶ້ນພາຍຫຼັງວັນທີ່ອອກບົດລາຍງານທາງການເງິນ

ບໍ່ມີເຫດການທີ່ເປັນສາລະສຳຄັນຫຼັງບົດລາຍງານຖານະການເງິນ ທີ່ມີຜົນກະທົບທີ່ເປັນສາລະສຳຄັນຕໍ່ຕົວເລກໃນຂໍ້ມູນການເງິນກາງປີ ຂອງບໍລິສັດ.